# ໝາກຜົນຂອງການຜະລິດລະດູແລ້ງປີ 2018-2019, ວຽກດ້ານການຕະຫຼາດ


ຕະຫຼາດຊາວນາ ໂດຍກຸ່ມຊາວນາເຊສາລະລອງ

ໃນກິດຈະກຳດ້ານການຕະຫຼາດ, ເປົ້າໝາຍຂອງພວກເຮົາແມ່ນການປ່ຽນທັດສະນະ; ຈາກ"ປູກລ້າໆ"ມາເປັນ"ປູກເພື່ອຂາຍໃຫ້ຕະຫຼາດ ແລະເລືອກປູກພືດທີ່ລົງທຶນໄປແລ້ວສາມາດຂາຍແລ້ວມີຜົນກຳໄລ" ດັ່ງນັ້ນ,ໂຄງການ Savan PAD ແມ່ນການຊ່ວຍເຫຼືອໃນດ້ານ: ①ແມ່ນເຂົ້າໃຈແນວໂນ້ມຂອງການຕະຫຼາດ, ②ການຄິດໄລ່ຜົນກຳໄລ-ຄ່າໃຊ້ຈ່າຍ ແລະ ວາງແຜນເພື່ອການຜະລິດ. ③ນອກຈາກນັ້ນ,ຍັງມີກິດຈະກຳສົ່ງເສີມຊ່ອງທາງການຂາຍໂດຍການສ້າງຄວາມເຂັ້ມແຂງເຄືອຂ່າຍລະຫວ່າງຊາວນາກັບພາກສ່ວນທຸລະກິດເອກະຊົນ, ການນຳສະເໜີເຕັກນິກການຜະລິດ ຜັກຊະນິດໃໝ່ທີ່ຕະຫຼາດບໍ່ທັນຄຸ້ນເຄີຍ,ພ້ອມດຽວກັນນັ້ນ,ຜັກຊະນິດນັ້ນໆຕ້ອງຖືກກັບຄວາມຕ້ອງການຂອງຕະຫຼາດ. ໃນສະບັບນີ້, ພວກເຮົາຈະລາຍງານໃນກິດຈະກຳ ແລະ ໝາກຜົນທີ່ໄດ້ຮັບຂອງການຕະຫຼາດພາກສະໜາມ ສົກປີ 2018-2019.

## 1) ກິດຈະກຳຫຼັກໆ

**① ການຜະລິດຈຸດປະສົງເພື່ອຂາຍ(ຜະລິດເພື່ອຂາຍ)**
- ເຂົ້າໃຈສະພາບຕະຫຼາດໂດຍບັນດາຊາວນາ
- ເປັນຜູ້ຊ່ວຍຊາວນາໃນການຄາດຄະເນ ແລະ ການເລືອກປູກພືດທີ່ເໝາະສົມກັບສະພາບຂອງແຕ່ລະຄອບຄົວ
- ໃຫ້ຄຳແນະນຳສຳລັບເຕັກນິກການປູກ

**② ການສ້າງມູນຄ່າໃຫ້ພືດຜັກ**
- ຜັກທີ່ປອດໄພ (ປູກໂດຍປາສະຈາກສານເຄມີ)
- ຜັກທີ່ຕະຫຼາດບໍ່ທັນຄຸ້ນເຄີຍ
- ເປັນຜູ້ຊ່ວຍໃນດ້ານເຕັກນິກການຜະລິດ(ຕົວຢ່າງ: ນ້ຳໝັກໄລ່ແມງໄມ້ໂດຍນຳໃຊ້ວັດຖຸດິບຈາກທຳມະຊາດເທົ່ານັ້ນ)

**③ ການເພີ່ມຊ່ອງທາງການຂາຍ**
- ເປັນສື່ກາງສຳລັບການປະສານກັບສາທາລະນະ(ການປະສານລະຫວ່າງຊາວນາ ແລະ ບໍລິສັດ,ຫ້າງຮ້ານ)
- ການຊອກຫາລູກຄ້າໃໝ່ໆໂດຍການເຂົ້າຢ້ຽມຢາມບັນດາຮ້ານອາຫານ ແລະ ສະຖານທີ່ອື່ນໆ.
- ການເປີດໃຊ້ Facebook ແລະ ການໂຄສະນາຜ່ານທາງ TV
- ໄດ້ເປີດຕະຫຼາດຜັກໃຫ້ຊາວນາ

### ປ່ຽນຈາກ"ປູກ ແລະ ຂາຍ"ມາເປັນ"ປູກເພື່ອຂາຍ"




## 2) ຜົນໄດ້ຮັບ

**① ກຸ່ມຊາວນາບ້ານໂພນສົມ**
- ການນຳສະເໜີຜັກຊະນິດໃໝ່ໆ (ໝາກແຕງຍີ່ປຸ່ນ,ຫົວຜັກກາດຂາວ,ແຕງຊູກີນີ,ກະຈຽບຂຽວ ແລະ ຫົວຜັກກາດແດງອື່ນໆ ໂດຍການເພີ່ມຊ່ອງທາງການຂາຍ, ຍອດຂາຍໄດ້ເພີ່ມຂຶ້ນປະມານ 1,5 ເທົ່າ. ນອກຈາກນັ້ນ,ໄດ້ຊອກຫາລູກຄ້າ(ເຊັ່ນວ່າລູກຄ້າພາກເອກະຊົນທີ່ຮັບຊື້ຜັກຈຳນວນຫຼາຍ,ຮ້ານອາຫານເປັນຕົ້ນ ອື່ນໆ).
- ມີຊາວນາຜູ້ໃໝ່ໆເຂົ້າຮ່ວມໃນກຸ່ມປູກຜັກ (6-20 ຄອບຄົວ) ເນື້ອທີ່ການຜະລິດກໍ່ເພີ່ມຂຶ້ນ (2 ເທົ່າ)

<ການສົມທຽບການຂາຍ (ຕໍ່ຄອບຄົວ)> (ກີບ/ຄອບຄົວ)



## ② ພື້ນທີ່ອື່ນໆ (ຊາວນາທີ່ປູກຜັກມີ 30 ຄອບຄົວ)

- ການຮຽນຮູ້ເຕັກນິກການປູກຜັກ: ຫົວຜັກກາດຂາວ,ແຕງຊູກີນີ, ຜັກກາດຊອມດອກ, ກະຈ່ຽບຂຽວ,ໝາກເຜັດປີ,ຫົວກາຣົດ (ສຳລັບຜັກບາງຊະນິດ, ການທົດລອງປູກແມ່ນສຳເລັດ ແລະ ປະຈຸບັນນີ້ກຳລັງໄດ້ຂາຍຕົວຈິງຢູ່ຕະຫຼາດ)
- ການປູກເຫັດ: ການປູກທົດລອງແມ່ນກຳລັງໄດ້ຂາຍຢູ່ໃນພື້ນທີ່ໃກ້ຄຽງ.
- ການສົ່ງເສີມການຂາຍ: ການຂາຍສົ່ງໃຫ້ຮ້ານອາຫານ, ລູກຄ້າຂາປະຈຳທີ່ສັ່ງໄວ້ລ່ວງໜ້າ, ອື່ນໆ.
- ການຮ່ວມມືການຂາຍ: ໄດ້ເລີ່ມເປັນຜູ້ອາສາຂາຍຊ່ວຍໂດຍກຸ່ມຊາວນາບ້ານໂພນສິມ



ການລົງສັງເກດເບິ່ງສວນໝາກເຜັດປີ

**ຜັກຊະນິດໃໝ່ໆທີ່ຊາວນາມີເຕັກນິກການປູກຊຳນິຊຳນານ**



ຫົວຜັກກາດຂາວ



ແຕງຊູກີນີ



ຜັກກາດກວາງຕຸ້ງ



ໝາກກະຈຽບຂຽວ



ໝາກເຜັດປີ



ຫົວກາຣົດ

### ຄຳຄິດເຫັນຈາກຊາວນາ (1) ທ່ານ ແສງສະຫວ່າງ ຫົວໜ້າກຸ່ມຊາວນາບ້ານໂພນສິມ



ກ່ອນມີໂຄງການ Savan PAD ເຂົ້າມາ, ການປູກພືດທີ່ປູກຍາກຂອງພວກເຮົາບໍ່ເຄີຍສຳເລັດຈັກເທື່ອ. ແຕ່ປະຈຸບັນນີ້ພວກເຮົາໝັ້ນໃຈເວົ້າໄດ້ວ່າ: ສາມາດປູກພືດເຫຼົ່ານັ້ນຢ່າງມີຄຸນະພາບ ຜັກທີ່ພວກເຮົາຜະລິດໄດ້ແມ່ນຂາຍໝົດໃນຕະຫຼາດແຕ່ລະມື້ຈົນເກືອບຈະບໍ່ພໍ ແລະ ເບິ່ງຄືວ່າຄວາມຕ້ອງການຂອງລູກຄ້າຍິ່ງເພີ່ມຂຶ້ນເລື້ອຍໆ. ປະຈຸບັນນີ້ກຸ່ມຂອງພວກເຮົາໄດ້ເລີ່ມພົວພັນກັບກຸ່ມອື່ນໆເພື່ອຊ່ວຍເຂົາເຈົ້າຂາຍຜັກທີ່ເຂົາຜະລິດໄດ້.

### ຄຳຄິດເຫັນຈາກຊາວນາ (2) ທ່ານ ກິປ້ ຫົວຫນ້າກຸ່ມຊາວນາເຂດເຊສາລະລອງ



ກ່ອນມີໂຄງການເຂົ້າມາພວກເຮົາບໍ່ມີອາຊີບເສີມ, ແຕ່ວ່າຫລັງຈາກມີໂຄງການເຂົ້າມານີ້, ເພິ່ນໄດ້ເປີດໂອກາດໃຫ້ມີອາຊີບເສີມເຊັ່ນ: ການເຮັດກະສິກຳປູກຜັກເພື່ອເປັນສິນຄ້າ,ການໄປທັດສະນະສຶກສາທີ່ກຸ່ມປູກຜັກອິນຊີບ້ານໂພນສິມ ແລະ ປະເທດໄທ, ເຊິ່ງມັນໄດ້ສ້າງແຮງບັນດານໃຈໃຫ້ກຸ່ມຂອງພວກເຮົາໃຫ້ມີແນວຄິດຫ້າວຫັນ ແລະ ຢາກເປັນຜູ້ປູກຜັກມືອາຊີບໃນອານາຄົດ, ນັບແຕ່ມີຕະຫຼາດຜັກອິນຊີເມືອງທ່າປາງທອງ ແລ້ວ ເຫັນວ່າກຸ່ມປູກຜັກຂອງພວກເຮົາມີລາຍຮັບເຂົ້າຄອບຄົວ,ໃນອະນາຄົດນີ້ຈະຂະຫຍາຍເນື້ອທີ່ປູກຜັກໃຫ້ຫຼາຍຂຶ້ນເພື່ອໃຫ້ໄດ້ຜົນຜະລິດສົ່ງຕະຫຼາດຫຼາຍຂຶ້ນ.

### <ລາຍງານຄັ້ງຕໍ່ໄປແມ່ນ (ຈະອອກໃນຊ່ວງປະມານກາງເດືອນສິງຫາ) ດ້ານຊົນລະປະທານ>

ການບໍລິຫານນ້ຳ ແລະ ການບໍລິຫານລະບົບຊົນລະປະທານ ແມ່ນກິດຈະກຳປະຈຳຂອງກຸ່ມຜູ້ນຳໃຊ້ນ້ຳ. ສຳລັບການເລີ່ມປະຕິບັດກິດຈຳກຳໃຫ້ສອດຄ່ອງລາບລື່ນ, ງົບປະມານກໍ່ເປັນສິ່ງທີ່ຈຳເປັນ.

ໃນລາຍງານຄັ້ງຕໍ່ໄປ,ພວກເຮົາຈະຂຽນກ່ຽວກັບການປັບປຸງບັນຊີຂອງແຕ່ລະກຸ່ມຂອງຜູ້ນຳໃຊ້ນ້ຳຊົນລະປະທານ.

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)